ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຄະນະສະເພາະກິດ

ເລກທີ 0284/ອຄ.ສພກ

ນະຄອນຫຼວງວຽງຈັນ, ວັນທີ 20 APR 2021

# ແຈ້ງການ

ເຖິງ : - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 308/ຫສນຍ, ລົງວັນທີ 31 ມີນາ 2021 ວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະເດືອນເມສາ ຫາ ເດືອນພຶດສະພາ 2021.
- ອີງຕາມແຈ້ງການຂອງຄະນະສະເພາະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0524/ອຄ.ສພກ, ລົງວັນທີ 2 ມິຖຸນາ 2020.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ປະຕິບັດ ບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 308/ຫສນຍ, ລົງວັນທີ 31 ມີນາ 2021 ໃນໄລຍະເດືອນເມສາ ຫາ ເດືອນພຶດສະພາ 2021;
2. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທຸກປະເພດສາມາດເປີດດຳເນີນກິດຈະການເປັນປົກກະຕິໄດ້ ໂດຍໃຫ້ປະຕິບັດເງື່ອນໄຂຕາມ ຂໍ້ 2.1 ແລະ ມາດຕະການຕາມ ຂໍ້ 2.2 ຂອງຄຳແນະນຳຂອງຄະນະສະເພາະກິດກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0524/ອຄ.ສພກ, ລົງວັນທີ 2 ມິຖຸນາ 2020;
3. ການນຳເຂົ້າຊ່ຽວຊານ, ວິຊາການ ຫຼື ແຮງງານຈາກຕ່າງປະເທດ ໃຫ້ປະຕິບັດຕາມຄຳແນະນຳສຳລັບການເດີນທາງເຂົ້າ-ອອກ ສປປ ລາວ ໃນໄລຍະດຳເນີນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດຂັ້ນສູນກາງ ວາງອອກໃນແຕ່ລະໄລຍະ;
4. ສຳລັບພະນັກງານກຳມະກອນທີ່ກັບບ້ານໄປສະຫຼອງປີໃໝ່ທີ່ໄດ້ເດີນທາງມາຈາກຕ່າງແຂວງ ທີ່ມີການລະບາດໃນຊຸມຊົນ ແມ່ນໃຫ້ມີການຕິດຕາມກວດກາສຸຂະພາບເປັນພິເສດ. ຖ້າມີເງື່ອນໄຂສະດວກຄວນແຍກ

ບໍລິເວນເຮັດວຽກ ແລະ ບ່ອນພັກເຊົາຕ່າງຫາກໃຫ້ຄົບຕາມກຳນົດເວລາ 14 ວັນ ແລ້ວຈຶ່ງໃຫ້ເຮັດວຽກຕາມປົກກະຕິ;

5. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສະຫຼຸບລາຍງານການຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ດັ່ງນີ້:
   1) ກໍລະນີສົງໃສ ແລະ ກວດພົບມີການແຜ່ລະບາດຂອງພະຍາດໂຄວິດ-19 ພາຍໃນໂຮງງານທີ່ຕັ້ງຢູ່ໃນແຂວງຂອງທ່ານ ໃຫ້ລາຍງານທັນທີມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ຄະນະສະເພາະກິດຂອງແຂວງ, ນະຄອນຫຼວງວຽງຈັນ.
   2) ໃຫ້ລາຍງານປົກກະຕິການຈັດຕັ້ງປະຕິບັດບັນດາເງື່ອນໄຂ ແລະ ມາດຕະການປ້ອງກັນການແຜ່ລະບາດຂອງພະ ຍາດໂຄວິດ-19 ມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ ທຸກໆວັນທີ 25 ຂອງເດືອນ.
6. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ

ຄະນະສະເພາະກິດ

ສົມຈິດ ອິນທະມິດ

- ສຳເນົາສົ່ງ:

- ທ່ານລັດຖະມົນຕີ, ຮອງລັດຖະມົນຕີ ທ່ານລະ 1 ສະບັບ.
- ຫ້ອງການ ກະຊວງ ອຄ 1 ສະບັບ.